ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4211/ກປ

ນະຄອນຫຼວງວຽງຈັນ, ວັນທີ 29/11/19

# ຂໍ້ຕົກລົງ

## ວ່າດ້ວຍ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ

- ອີງຕາມ ກົດໝາຍວ່າດ້ວຍການປະມົງ ສະບັບເລກທີ 03/ສພຊ, ລົງວັນທີ 09 ກໍລະກົດ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີຂອງ ກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 3015/ກລປ, ລົງວັນທີ 23 ຕຸລາ 2019;
- ອີງຕາມ ການຄົ້ນຄ້ວາ ແລະ ສະເໜີຂອງ ກົມນະໂຍບາຍ ແລະ ນິຕິກຳ ສະບັບເລກທີ 688/ກນນ, ລົງວັນທີ 20 ພະຈິກ 2019.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄວບຄຸມການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຢູ່ ສປປ ລາວ ເພື່ອປ້ອງກັນ ແລະ ສະກັດກັ້ນການເຂົ້າມາ, ກໍ່ຕົວ, ແຜ່ກະຈາຍຂອງພະຍາດສັດນ້ຳ ແລະ ການທຳລາຍຈາກສັດນ້ຳຕ່າງແດນ ທີ່ເປັນອັນຕະລາຍຕໍ່ຊັບພະຍາກອນສັດນ້ຳພາຍໃນປະເທດ ແນໃສ່ປົກປ້ອງຊີວິດ, ສຸຂະພາບຂອງຄົນ, ສັດນ້ຳ, ພັນສັດນ້ຳພື້ນເມືອງ ແລະ ສິ່ງແວດລ້ອມ ໃຫ້ມີຄວາມປອດໄພ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ສັນຍາສຸຂານາໄມສັດ ແລະ ສຸຂານາໄມພືດ, ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 2 ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ

ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ແມ່ນການຈັດຕັ້ງປະຕິບັດບັນດາລະບຽບການກ່ຽວກັບຂັ້ນຕອນການອະນຸຍາດຂອງ ອົງການຄຸ້ມຄອງການປະມົງ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳສັດນ້ຳ ຫຼື ຜະລິດຕະພັນສັດນ້ຳ ເຂົ້າ, ອອກ ຫຼື ສົ່ງຜ່ານ ສປປ ລາວ ໂດຍຜ່ານດ່ານກວດກາສັດຕະວະແພດ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າທີ່ຖືກຂົນສົ່ງ** ໝາຍເຖິງ ລາຍການສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ທີ່ຖືກເຄື່ອນຍ້າຍຈາກປະເທດໜຶ່ງໄປອີກປະເທດໜຶ່ງ ທີ່ໄດ້ມີການບັນຈຸ, ຫຸ້ມຫໍ່ ແລະ ມີເອກະສານຢັ້ງຢືນດ້ານສຸຂະພາບ ຫຼື ສຸຂານາໄມຈາກອົງການຄຸ້ມຄອງຂອງປະເທດຕົ້ນທາງ;

2. **ເຊື້ອພະຍາດສັດນໍ້າ** ໝາຍເຖິງ ຈຸລິນຊີ, ແມ່ກາຝາກ ແລະ ເຊື້ອເຫັດ ໃດໜຶ່ງ ທີ່ເປັນສາເຫດ ຫຼື ເປັນຕົວປະກອບໃຫ້ເກີດພະຍາດໃນສັດນໍ້າ;

3. **ການຕິດເຊື້ອ** ໝາຍເຖິງ ການເຂົ້າໄປ ແລະ ກໍ່ຕົວ ຫຼື ການເພີ່ມຈໍານວນຂອງເຊື້ອພະຍາດສັດນໍ້າຢູ່ໃນຮ່າງກາຍຂອງຄົນ, ສັດ ແລະ ສັດນໍ້າ;

4. **ພະຍາດສັດນໍ້າທີ່ຈໍາເປັນຕ້ອງແຈ້ງ** ໝາຍເຖິງ ພະຍາດສັດນໍ້າ ທີ່ສາມາດຕິດຕໍ່ຈາກສັດນໍ້າສູ່ສັດນໍ້າ ຫຼື ຈາກສັດນໍ້າສູ່ຄົນ ຊຶ່ງມີການແຜ່ລາມໄວ, ສ້າງຜົນກະທົບທາງລົບຕໍ່ສຸຂະພາບ, ຊີວິດ, ເສດຖະກິດ ແລະ ສັງຄົມ;

5. **ການກັກກັນສັດນໍ້າ** ໝາຍເຖິງ ການຂັງສັດນໍ້າໄວ້ ເພື່ອໃຫ້ສັດນໍ້າໄດ້ພັກຜ່ອນ ໂດຍມີການໃຫ້ອາຫານປົກກະຕິ ເພື່ອເຝົ້າລະວັງ, ຕິດຕາມ, ກວດກາ, ວິໄຈ ແລະ ຢັ້ງຢືນ, ປິ່ນປົວຮັກສາ ແລະ ຂ້າເຊື້ອພະຍາດ;

6. **ການປະເມີນຄວາມສ່ຽງ** ໝາຍເຖິງ ການປະເມີນເພື່ອຊອກຫາຄວາມເປັນໄປໄດ້ກ່ຽວກັບ ຜົນກະທົບທາງດ້ານຊີວະ, ເສດຖະກິດ ທີ່ເກີດຈາກການນໍາເຂົ້າ ຊຶ່ງອາດເປັນອັນຕະລາຍ ຫຼື ແຜ່ກະຈາຍຢູ່ດິນແດນ ຂອງ ສປປ ລາວ;

7. **ການຂົນສົ່ງ** ໝາຍເຖິງ ວິທີການຂົນສົ່ງສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ໂດຍທາງບົກ, ທາງນໍ້າ ຫຼື ທາງອາກາດ;

8. **ເຈົ້າໜ້າທີ່ສັດຕະວະແພດ** ໝາຍເຖິງ ພະນັກງານສັດຕະວະແພດ ຫຼື ຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຊຶ່ງໄດ້ຮັບການຝຶກອົບຮົມ ຍົກລະດັບຄວາມຮູ້, ຄວາມສາມາດ ໃນການກວດກາວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ;

9. CITES (Convention on International Trade in Endangered Species of Wild Fauna and Flora: CITES) ໝາຍເຖິງ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ;

10. OIE (Office International des Epizooties: OIE) ໝາຍເຖິງ ອົງການສຸຂະພາບສັດສາກົນ ຊຶ່ງເປັນອົງການຈັດຕັ້ງສາກົນທີ່ຮັບຜິດຊອບວຽກງານ ສຸຂະພາບສັດ ແລະ ສັດນໍ້າ.

**ມາດຕາ 4 ຫຼັກການກ່ຽວກັບການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ**

ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ຕ້ອງຮັບປະກັນຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ກົດໝາຍ ແລະ ນິຕິກໍາ ຂອງ ສປປ ລາວ;
2. ຮັບປະກັນ ຄຸນນະພາບ ແລະ ຄວາມປອດໄພ ຕໍ່ສຸຂະພາບສັດນໍ້າ ແລະ ຜູ້ບໍລິໂພກ;
3. ປະຕິບັດ ຢ່າງເປັນເອກະພາບ, ໂປ່ງໃສ, ຍຸຕິທໍາ ແລະ ສາມາດກວດກາໄດ້;
4. ຮັບປະກັນ ບໍ່ສ້າງສິ່ງກີດຂວາງທີ່ບໍ່ຈໍາເປັນ ຕໍ່ການຄ້າ ແລະ ບໍ່ເລືອກປະຕິບັດ;
5. ສອດຄ່ອງກັບມາດຕະຖານດ້ານເຕັກນິກ ແລະ ຄໍາແນະນໍາຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ລວມທັງ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ໃນ ສປປ ລາວ.

## ໝວດທີ 2
## ການນຳເຂົ້າ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ

**ມາດຕາ 6 ການອະນຸຍາດນຳເຂົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 1 ຂອງຂໍ້ຕົກລົງສະບັບນີ້ ເພື່ອເປົ້າໝາຍທາງການຄ້າ ຕ້ອງໄດ້ຮັບອະນຸຍາດຈາກ ກົມລ້ຽງສັດ ແລະ ການປະມົງ. ສຳລັບ ການນຳເຂົ້າເພື່ອບໍລິໂພກພາຍໃນຄອບຄົວ ແມ່ນບໍ່ໄດ້ຂໍໃບອະນຸຍາດນຳເຂົ້າ ແຕ່ຕ້ອງໄດ້ແຈ້ງສິນຄ້າຕໍ່ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ເພື່ອດຳເນີນການກວດກາ, ບັນທຶກ ຫຼື ນຳໃຊ້ມາດຕະການທີ່ຈຳເປັນ ຕາມທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳເອົາສັດນ້ຳສາຍພັນຕ່າງແດນເຂົ້າມາລ້ຽງໃນ ສປປ ລາວ ຕ້ອງໄດ້ຮັບອະນຸຍາດ ຈາກກົມລ້ຽງສັດ ແລະ ການປະມົງ ແລະ ຕ້ອງມີໃບຢັ້ງຢືນການສຶກສາຜົນກະທົບຕໍ່ລະບົບນິເວດວິທະຍາ ແລະ ສິ່ງແວດລ້ອມ ຈາກສະຖາບັນທີ່ເຊື່ອຖືໄດ້, ມີການຢັ້ງຢືນຄວາມປອດໄພດ້ານຊີວະພາບ ແລະ ໄດ້ຜ່ານການປະເມີນຄວາມສ່ຽງຈາກ ອົງການຄຸ້ມຄອງການປະມົງ ຂອງ ສປປ ລາວ.

**ມາດຕາ 7 ເງື່ອນໄຂການນຳເຂົ້າ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ມາໃນ ສປປ ລາວ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບອະນຸຍາດນຳເຂົ້າທີ່ອອກໃຫ້ໂດຍ ອົງການຄຸ້ມຄອງການປະມົງ;
2. ມີໃບຢັ້ງຢືນສຸຂະພາບສັດນ້ຳ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດນ້ຳ ທີ່ອອກໃຫ້ໂດຍອົງການ ຫຼື ເຈົ້າໜ້າທີ່ຂອງລັດ ທີ່ກ່ຽວຂ້ອງຂອງປະເທດຕົ້ນທາງ ໂດຍຖືກຕ້ອງຕາມເງື່ອນໄຂການນຳເຂົ້າຂອງ ສປປ ລາວ;
3. ໃນກໍລະນີນຳເຂົ້າ ເພື່ອລ້ຽງເປັນແນວພັນສັດນ້ຳ ຕ້ອງມີໃບຢັ້ງຢືນກຳມະພັນສັດນ້ຳ ແລະ ໃບຢັ້ງຢືນມາດຕະຖານຟາມລ້ຽງສັດນ້ຳ;
4. ນຳເຂົ້າສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຕາມດ່ານທີ່ກຳນົດ ໂດຍອົງການຄຸ້ມຄອງການປະມົງ.

ໃນກໍລະນີ ໄດ້ຮັບອະນຸຍາດນຳເຂົ້າແລ້ວ, ແຕ່ຜົນຂອງການວິເຄາະຄວາມສ່ຽງ ໂດຍອົງການຄຸ້ມຄອງວຽກງານການປະມົງ ທີ່ຢັ້ງຢືນວ່າມີຄວາມສ່ຽງທີ່ຈະນຳເອົາເຊື້ອພະຍາດເຂົ້າມາແຜ່ລາມ ຫຼື ນຳເອົາທາດເບື່ອເຂົ້າມາແຜ່ກະຈາຍຢູ່ພາຍໃນປະເທດນັ້ນ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າ ໂດຍໃຫ້ແຈ້ງເຫດຜົນເປັນລາຍລັກອັກສອນ ກ່ຽວກັບການຫ້າມນັ້ນ ໃຫ້ແກ່ຜູ້ນຳເຂົ້າຊາບ.

**ມາດຕາ 8 ການປະກອບເອກະສານສຳລັບການຂໍອະນຸຍາດນຳເຂົ້າ**

ການປະກອບເອກະສານສຳລັບການຂໍອະນຸຍາດນຳເຂົ້າ ມີ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ;
2. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ;
3. ສຳເນົາ ໜັງສືເດີນທາງ (ຖ້າເປັນຄົນຕ່າງປະເທດ);

4. ໃບມອບສິດ (ຖ້າໃຫ້ຜູ້ອື່ນມາແລ່ນເອກະສານແທນ);

5. ສຳເນົາໃບທະບຽນວິສາຫະກິດ.

**ເອກະສານເພີ່ມເຕີມອື່ນ ໃນມື້ນຳສິນຄ້າເຂົ້າຕົວຈິງ ມີດັ່ງນີ້:**

1. ໃບຢັ້ງຢືນສຸຂະພາບສັດນ້ຳ ຫຼື ສຸຂານາໄມ ຈາກອົງການຄຸ້ມຄອງວຽກງານສັດຕະວະແພດ ຫຼື ປະມົງ ຂອງປະເທດຕົ້ນທາງ;

2. ສຳເນົາ ໃບຂົນສົ່ງສິນຄ້າ ຫຼື Bill of Lading/Airway Bill ກໍລະນີຂົນສົ່ງທາງທ່າເຮືອ ຫຼື ເຮືອບິນ;

3. ໃບຢັ້ງຢືນ CITES ຂອງປະເທດຕົ້ນທາງ ຫຼື ເອກະສານທີ່ກ່ຽວຂ້ອງກັບປະເທດທີສາມ ຖ້າເປັນປະເພດສັດນ້ຳຫວງຫ້າມ ຫຼື ຄວບຄຸມຂອງສາກົນ;

4. ໃບຢັ້ງຢືນການບຳບັດ, ຜົນການວິໄຈ ແລະ ການປ້ອງກັນພະຍາດສັດນ້ຳ ຖ້າມີຄວາມຈຳເປັນ.

**ມາດຕາ 9 ການກະກຽມກ່ອນການນຳເຂົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຕ້ອງກະກຽມ ແລະ ດຳເນີນການຕາມຂັ້ນຕອນ ດັ່ງນີ້:

1. ພົວພັນເອົາຂໍ້ມູນ, ລະບຽບການ ແລະ ຄຳຮ້ອງຂໍນຳເຂົ້າສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຢູ່ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ດ່ານກວດກາສັດຕະວະແພດສາກົນ, ກົມລ້ຽງສັດ ແລະ ການປະມົງ ຫຼື ດາວໂລດເອົາທີ່ເວບໄຊ www.dlf.maf.gov.la ຫຼື www.laotradeportal.gov.la;

2. ຍື່ນຄຳຮ້ອງ ຕໍ່ກົມລ້ຽງສັດ ແລະ ການປະມົງ ຢ່າງໜ້ອຍ ສິບຫ້າວັນ ກ່ອນນຳເຂົ້າ ຕາມແບບພິມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້ ເພື່ອໃຫ້ ກົມລ້ຽງສັດ ແລະ ການປະມົງ ປະເມີນຄວາມສ່ຽງ ແລະ ພິຈາລະນາ ອອກໃບອະນຸຍາດ ຕາມແບບພິມ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 4 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ຫ້າວັນລັດຖະການ. ສຳລັບອາຍຸຂອງໃບອະນຸຍາດນຳເຂົ້າ ແມ່ນໃຫ້ອີງໃສ່ລະດັບຂອງຄວາມສ່ຽງ ຕາມແຕ່ລະປະເພດ, ຊະນິດ ແລະ ຈຳນວນຂອງສິນຄ້າ ແຕ່ສູງສຸດບໍ່ໃຫ້ເກີນເກົ້າສິບວັນ;

3. ສົ່ງໃບອະນຸຍາດນຳເຂົ້າ ແລະ ເງື່ອນໄຂ ເຖິງຜູ້ສົ່ງອອກ ເພື່ອກະກຽມສິນຄ້າ ແລະ ຂໍອະນຸຍາດຈາກອົງການຄຸ້ມຄອງປະມົງຂອງປະເທດຕົ້ນທາງ ໃຫ້ສອດຄ່ອງກັບເງື່ອນໄຂຂອງ ສປປ ລາວ;

4. ແຈ້ງເອກະສານ, ວັນ, ເວລາ ທີ່ແນ່ນອນສຳລັບການນຳເຂົ້າ ຕໍ່ດ່ານກວດກາສັດຕະວະແພດສາກົນ ບ່ອນທີ່ຈະນຳເຂົ້າ ຢ່າງໜ້ອຍ ໜຶ່ງວັນ ກ່ອນມື້ນຳເຂົ້າ ເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ ໂດຍການອອກໃບຢັ້ງຢືນການກວດກາເອກະສານຢູ່ດ່ານ. ຖ້າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນໃຫ້ຜູ້ຂໍອະນຸຍາດນຳໄປປະກອບໃຫ້ຖືກຕ້ອງ.

**ມາດຕາ 10 ການປະຕິບັດຢູ່ດ່ານໃນເວລານຳເຂົ້າ**

ໃນເວລານຳເຂົ້າສັດນ້ຳ ແລະ ຜະລິດຕະພັນສັດນ້ຳຢູ່ດ່ານ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ນຳເຂົ້າ ແຈ້ງໃບຢັ້ງຢືນການກວດກາເອກະສານຢູ່ດ່ານ, ລາຍການສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຕໍ່ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ;

2. ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ບັນທຶກຂໍ້ມູນກ່ຽວກັບສັດນ້ຳ ແລະ ຜະລິດຕະພັນສັດນ້ຳເຂົ້າໃນຖານຂໍ້ມູນ ແລ້ວດຳເນີນການກວດກາ ແລະ ອອກໃບຢັ້ງຢືນການກວດກາຢູ່ດ່ານ ຕາມແບບພິມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 6 ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງສຳເນົາໄວ້ ໜຶ່ງສະບັບ ແລະ ແຈ້ງໃຫ້ຜູ້ນຳ

ເຂົ້າຈ່າຍຄ່າທຳນຽມ ແລະ ບໍລິການຕາມລະບຽບການ ແລ້ວຈຶ່ງອະນຸຍາດໃຫ້ເຄື່ອນຍ້າຍສິນຄ້າໄປຫາພາກສ່ວນພາສີ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ. ໃນກໍລະນີພົບເອກະສານມີການດັດແກ້ເນື້ອໃນ, ປອມລາຍເຊັນ ຫຼື ຕາປະທັບ ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງປະຕິເສດການນຳເຂົ້າ ພ້ອມທັງກັກສິນຄ້ານັ້ນໄວ້ ເພື່ອດຳເນີນການກວດກາ, ສືບສວນ-ສອບສວນ ແລະ ລາຍງານໃຫ້ ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຮັບຊາບໂດຍດ່ວນ;

3. ໃນກໍລະນີສົງໄສ ສັດນ້ຳ ຫຼື ຜະລິດຕະພັນສັດນ້ຳ ຕິດ ຫຼື ປົນເປື້ອນດ້ວຍພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຕາມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 2 ໃຫ້ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ແຈ້ງຜູ້ນຳເຂົ້າ ນຳສິນຄ້າໄປກັກກັນຢູ່ສະຖານທີ່ກັກກັນ, ແນະນຳແຜນການຕິດຕາມ, ກັກກັນ ແລະ ມາດຕະການດ້ານວິຊາການທີ່ນຳໃຊ້ ໃຫ້ແກ່ຜູ້ນຳເຂົ້າຊາບ ພ້ອມທັງປະຕິບັດມາດຕະການໃດໜຶ່ງ ໂດຍດ່ວນ ດັ່ງນີ້:

- ເກັບ ແລະ ສົ່ງຕົວຢ່າງຂອງສັດນ້ຳ ແລະ ຜະລິດຕະພັນສັດນ້ຳນັ້ນ ໄປວິໄຈ;
- ດຳເນີນການອະນາໄມ ຂ້າເຊື້ອພາຫະນະ ແລະ ອຸປະກອນສຳລັບການຂົນສົ່ງ;
- ພາຍຫຼັງສຳເລັດການວິໄຈ ຕ້ອງແຈ້ງຜົນການວິໄຈ ໃຫ້ຜູ້ນຳເຂົ້າຊາບ.

4. ກໍລະນີ ພົບພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ, ຢາ ຫຼື ສານຕົກຄ້າງທີ່ເປັນອັນຕະລາຍ, ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງນຳໃຊ້ມາດຕະການໃດໜຶ່ງ ດັ່ງນີ້:

- ກັກ ຫຼື ກັກກັນສັດນ້ຳ ຫຼື ຜະລິດຕະພັນສັດນ້ຳ;
- ສົ່ງສິນຄ້າກັບຄືນປະເທດສົ່ງອອກ;
- ບຳບັດ, ອະນາໄມ ແລະ ຂ້າເຊື້ອພະຍາດທີ່ຕິດ ຫຼື ປົນເປື້ອນມານຳສິນຄ້າ ແລະ ວັດຖຸປະກອນທີ່ກ່ຽວຂ້ອງ;
- ທຳລາຍສິນຄ້າດັ່ງກ່າວຕາມຫຼັກວິຊາການ;
- ລາຍງານໃຫ້ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ກົມລ້ຽງສັດ ແລະ ການປະມົງ ຮັບຊາບ ເພື່ອແຈ້ງຂໍ້ມູນໄປຍັງອົງການສຸຂະພາບສັດສາກົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ປະເທດທີ່ສົ່ງອອກຊາບ ພາຍໃນ ຊາວສີ່ຊົ່ວໂມງ.

**ມາດຕາ 11 ການໃຫ້ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳຜ່ານດ່ານ**

ພາຍຫຼັງ ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ດຳເນີນການກວດກາເອກະສານທີ່ກ່ຽວຂ້ອງກັບສິນຄ້າ ແລະ ອອກໃບຢັ້ງຢືນການກວດກາແລ້ວ, ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງປ່ອຍສິນຄ້າຜ່ານດ່ານ ພ້ອມທັງ ແນະນຳໃຫ້ຜູ້ນຳເຂົ້າໄປແຈ້ງເອກະສານຕໍ່ເຈົ້າໜ້າທີ່ພາສີ ຫຼື ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ ເພື່ອດຳເນີນຕາມລະບຽບການ.

ກໍລະນີ ມີຄວາມຈຳເປັນຕ້ອງໄດ້ກວດກາພາຍຫຼັງການນຳເຂົ້າ ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງແຈ້ງໃຫ້ຜູ້ນຳເຂົ້າ ເຄື່ອນຍ້າຍສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ໄປຫາສະຖານທີ່ກັກກັນ ຫຼື ສະຖານທີ່ອື່ນ ທີ່ອົງການຄຸ້ມຄອງການປະມົງ ຮັບຮອງ ເພື່ອດຳເນີນການຕິດຕາມກວດກາ ຕາມໄລຍະເວລາທີ່ກຳນົດ.

**ມາດຕາ 12 ການໂຈະ ຫຼື ຍົກເລີກ ໃບອະນຸຍາດນຳເຂົ້າ**

ດ່ານກວດກາສັດຕະວະແພດ ສະເໜີກົມລ້ຽງສັດ ແລະ ການປະມົງ ເພື່ອພິຈາລະນາ ໂຈະ ຫຼື ຍົກເລີກໃບອະນຸຍາດນຳເຂົ້າ ຖ້າເຫັນວ່າມີການລະເມີດ ກໍລະນີໃດໜຶ່ງ ດັ່ງນີ້:

1. ກວດພົບ ປະເພດ ຫຼື ປະລິມານສິນຄ້າ ບໍ່ຖືກຕ້ອງກັບຂໍ້ມູນທີ່ໄດ້ກຳນົດໄວ້ ໃນໃບອະນຸຍາດ;
2. ນຳສິນຄ້າເຂົ້າດ່ານ ບໍ່ຖືກຕາມການກຳນົດໄວ້ໃນໃບອະນຸຍາດນຳເຂົ້າ;
3. ນຳໃຊ້ໃບອະນຸຍາດນຳເຂົ້າທີ່ໝົດອາຍຸການນຳໃຊ້;

4. ສິງໄສ ມີ ຫຼື ປົນເປື້ອນເຊື້ອພະຍາດ ທີ່ກຳນົດຢູ່ໃນບັນຊີລາຍຊື່ພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ;

5. ກວດພົບພະຍາດສັດນ້ຳຕ່າງແດນຊະນິດໃໝ່ ຫຼື ພະຍາດສັດນ້ຳທີ່ບໍ່ຮູ້ຈັກ ຫຼື ພະຍາດທີ່ນອນຢູ່ໃນບັນຊີພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ;

6. ມີການຢັ້ງຢືນວ່າສິນຄ້ານຳເຂົ້າ ມີການປົນເປື້ອນດ້ວຍຢາ, ສານກະຕຸ້ນ ຫຼື ສານເຄມີທີ່ເປັນອັນຕະລາຍເກີນລະດັບຄວາມປອດໄພ ຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ;

7. ມີການລາຍງານ ພະຍາດສັດນ້ຳລະບາດຢູ່ປະເທດສົ່ງອອກ.

**ມາດຕາ 13 ການຕິດຕາມກວດກາພາຍຫຼັງການນຳເຂົ້າ**

ການຕິດຕາມກວດກາພາຍຫຼັງການນຳເຂົ້າ ໃຫ້ດຳເນີນໄດ້ ໃນກໍລະນີທີ່ມີຄວາມຈຳເປັນ ດັ່ງນີ້:

1. ມີການກັກກັນສັດນ້ຳ ທີ່ພົບອາການສົງໄສເກີດພະຍາດສັດນ້ຳ ຫຼື ມີການສົງໄສພົບສິ່ງທີ່ເປັນອັນຕະລາຍໃນຜະລິດຕະພັນສັດນ້ຳ ຊຶ່ງຕ້ອງໄດ້ຕິດຕາມກວດກາ ແລະ ເກັບຕົວຢ່າງນຳໄປວິໄຈເພີ່ມ;

2. ສັດນ້ຳໄດ້ຮັບບາດເຈັບ ຫຼື ມີອາການຜິດປົກກະຕິ ຈາກການຂົນສົ່ງ ຊຶ່ງຕ້ອງໄດ້ຕິດຕາມ, ບຳບັດ ແລະ ປິ່ນປົວເປັນການສະເພາະ;

3. ສັດນ້ຳ ຕ້ອງໄດ້ກັກກັນຢູ່ສະຖານທີ່ໃດໜຶ່ງ ທີ່ອົງການຄຸ້ມຄອງການປະມົງ ຮັບຮອງ ກ່ອນນຳເຂົ້າລ້ຽງໃນຟາມ.

ໃນລະຫວ່າງການຕິດຕາມ ກວດກາ ຢູ່ສະຖານທີ່ກັກກັນ ຫາກບໍ່ພົບພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຫຼື ບໍ່ພົບສິ່ງທີ່ເປັນອັນຕະລາຍ, ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງອອກໃບຢັ້ງຢືນການກັກກັນສັດນ້ຳພ້ອມທັງອະນຸຍາດປ່ອຍສິນຄ້າອອກຈາກສະຖານທີ່ກັກກັນ. ກໍລະນີພົບເຊື້ອພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຫຼື ສິ່ງເປັນອັນຕະລາຍ ເຈົ້າໜ້າທີ່ສັດຕະວະແພດ ຕ້ອງລາຍງານໃຫ້ອົງການຄຸ້ມຄອງການປະມົງ ຊາບໂດຍດ່ວນ ເພື່ອດຳເນີນມາດຕະການຄວບຄຸມໃຫ້ທັນການ.

## ໝວດທີ 3
## ການສົ່ງອອກ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ

**ມາດຕາ 14 ການກະກຽມກ່ອນການສົ່ງອອກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງອອກສັດນ້ຳ ແລະ ຜະລິດຕະພັນສັດນ້ຳຕ້ອງກະກຽມ ແລະ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ພົວພັນເອົາ ຂໍ້ມູນ, ລະບຽບການ ແລະ ຄຳຮ້ອງຂໍນຳເຂົ້າສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຂອງປະເທດທີ່ຈະນຳເຂົ້າ;

2. ຂໍອະນຸຍາດນຳເຂົ້າຕາມລະບຽບການທີ່ອົງການຄຸ້ມຄອງຂອງປະເທດນຳເຂົ້າກຳນົດ;

3. ແຈ້ງໃບອະນຸຍາດ ແລະ ເງື່ອນໄຂການນຳເຂົ້າ ຂອງປະເທດທີ່ຈະນຳເຂົ້າ ໃຫ້ກົມລ້ຽງສັດ ແລະ ການປະມົງ ຊາບ;

4. ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານຂໍອະນຸຍາດສົ່ງອອກ ຕໍ່ ກົມລ້ຽງສັດ ແລະ ການປະມົງ ຢ່າງຊ້າສິບຫ້າວັນ ກ່ອນການສົ່ງອອກ ຕາມແບບພິມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້ ເພື່ອດຳເນີນການກວດກາ ແລະ ອອກໃບຢັ້ງຢືນສຸຂະພາບສັດນ້ຳ ຫຼື ສຸຂານາໄມ ຕາມແບບພິມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 5 ຂອງຂໍ້ຕົກລົງສະບັບນີ້ ແລະ ໃບອະນຸຍາດສົ່ງອອກໃຫ້ແກ່ຜູ້ຂໍສົ່ງອອກ.

**ມາດຕາ 15 ການປະຕິບັດຢູ່ດ່ານໃນເວລາສົ່ງອອກ**

ໃນເວລາສົ່ງອອກ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ຢູ່ດ່ານ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ສົ່ງອອກ ຕ້ອງແຈ້ງເອກະສານ ແລະ ບອກວັນ, ເວລາ ທີ່ແນ່ນອນສໍາລັບການສົ່ງອອກ ຕໍ່ດ່ານກວດກາສັດຕະວະແພດສາກົນບ່ອນທີ່ຈະສົ່ງອອກ ຢ່າງໜ້ອຍ ໜຶ່ງວັນ ກ່ອນການສົ່ງອອກ ເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ. ຖ້າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ສັດຕະວະແພດປະຈໍາດ່ານ ຕ້ອງແນະນໍາໃຫ້ຜູ້ຂໍອະນຸຍາດນໍາໄປປະກອບໃຫ້ຖືກຕ້ອງ;

2. ໃນມື້ສົ່ງອອກ ຜູ້ສົ່ງອອກ ຕ້ອງແຈ້ງໃບຢັ້ງຢືນການກວດກາເອກະສານ ແລະ ລາຍການສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ຕໍ່ເຈົ້າໜ້າສັດຕະວະແພດປະຈໍາດ່ານ ເພື່ອບັນທຶກເຂົ້າໃນຖານຂໍ້ມູນ;

3. ເຈົ້າໜ້າທີ່ສັດຕະວະແພດປະຈໍາດ່ານ ກວດກາເອກະສານ ແລະ ສິນຄ້າຕົວຈິງ ແລະ ອອກໃບຢັ້ງຢືນການກວດກາຢູ່ດ່ານ ພ້ອມທັງແຈ້ງໃຫ້ຜູ້ສົ່ງອອກ ຈ່າຍຄ່າທໍານຽມ ແລະ ຄ່າບໍລິການຕາມລະບຽບການ ຈຶ່ງອະນຸຍາດໃຫ້ເຄື່ອນຍ້າຍສິນຄ້າໄປຫາພາກສ່ວນພາສີ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 16 ການປະຕິເສດການສົ່ງອອກ**

ກົມລ້ຽງສັດ ແລະ ການປະມົງ ສາມາດປະຕິເສດ ພ້ອມທັງແຈ້ງໃຫ້ເຈົ້າຂອງສິນຄ້າຊາບໃນກໍລະນີ ເອກະສານມີການດັດແກ້ເນື້ອໃນ, ປອມລາຍເຊັນ ຫຼື ຕາປະທັບຂອງເຈົ້າໜ້າທີ່ສັດຕະວະແພດ, ມີລາຍງານການພົບເຊື້ອພະຍາດສັດນໍ້າທີ່ຈໍາເປັນຕ້ອງແຈ້ງ ຫຼື ພະຍາດສັດນໍ້າອື່ນ ຫຼື ສິ່ງທີ່ເປັນອັນຕະລາຍ ທີ່ປະເທດນໍາເຂົ້າຫ້າມນໍາເຂົ້າຢູ່ສະຖານທີ່ ທີ່ເປັນແຫຼ່ງກໍາເນີດສິນຄ້າ.

## ໝວດທີ 4
## ການສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ

**ມາດຕາ 17 ການຂໍອະນຸຍາດສົ່ງຜ່ານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ຜ່ານ ສປປ ລາວ ຕ້ອງປະກອບເອກະສານ ແລະ ຍື່ນຄໍາຮ້ອງຂໍອະນຸຍາດສົ່ງຜ່ານຕໍ່ ກົມລ້ຽງສັດ ແລະ ການປະມົງ ຕາມແບບພິມທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້ ຢ່າງໜ້ອຍ ສິບຫ້າວັນ ກ່ອນສິນຄ້າມາເຖິງດ່ານຂາເຂົ້າ.

**ມາດຕາ 18 ເອກະສານປະກອບສໍາລັບການຂໍໃບອະນຸຍາດສົ່ງຜ່ານ**

ເອກະສານປະກອບສໍາລັບການຂໍໃບອະນຸຍາດສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ມີ ດັ່ງນີ້:

1. ສໍາເນົາ ບັດປະຈໍາຕົວ ຫຼື ສໍາມະໂນຄົວ;
2. ສໍາເນົາ ໜັງສືເດີນທາງ (ຖ້າເປັນຄົນຕ່າງປະເທດ);
3. ໃບມອບສິດ (ຖ້າໃຫ້ຜູ້ອື່ນມາແລ່ນເອກະສານແທນ);
4. ສໍາເນົາ ໃບທະບຽນວິສາຫະກິດ.

ເອກະສານເພີ່ມເຕີມອື່ນ ໃນມື້ນໍາສິນຄ້າເຂົ້າຕົວຈິງ ມີ ດັ່ງນີ້:

1. ໃບຢັ້ງຢືນສຸຂະພາບສັດນໍ້າ ຫຼື ສຸຂານາໄມຈາກອົງການຄຸ້ມຄອງວຽກງານສັດຕະວະແພດ ຫຼື ອົງການຄຸ້ມຄອງການປະມົງ ຂອງປະເທດຕົ້ນທາງ;

2. ໃບຢັ້ງຢືນ CITES ຂອງປະເທດຕົ້ນທາງ ຫຼື ເອກະສານທີ່ກ່ຽວຂ້ອງກັບປະເທດທີສາມ ຖ້າເປັນປະເພດສັດນ້ຳຫວງຫ້າມ ຫຼື ຄວບຄຸມຂອງສາກົນ;

3. ເອກະສານແຈ້ງ ກ່ຽວກັບການບຳບັດ ຖ້າຈຳເປັນ;

4. ສຳເນົາ ໃບຂົນສົ່ງສິນຄ້າຫຼື Bill of Lading/Airway Bill ກໍລະນີຂົນສົ່ງທາງທ່າເຮືອ ຫຼື ເຮືອບິນ;

5. ເອກະສານຫຼັກຖານອື່ນ ເປັນຕົ້ນ ໃບອະນຸຍາດຂອງການນຳເຂົ້າຂອງປະເທດປາຍທາງ ຫຼື ສັນຍາລະຫວ່າງຄູ່ຄ້າ ຂອງປະເທດຕົ້ນທາງ ແລະ ປະເທດປາຍທາງ.

**ມາດຕາ 19 ການປະຕິບັດຢູ່ດ່ານໃນເວລານຳເຂົ້າເພື່ອສົ່ງຜ່ານ**

ກ່ອນສິນຄ້າມາເຖິງດ່ານຂາເຂົ້າຢ່າງໜ້ອຍໜຶ່ງວັນ ຜູ້ຂົນສົ່ງສິນຄ້າ ຕ້ອງແຈ້ງເອກະສານກ່ຽວກັບສິນຄ້າ ຕໍ່ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ທີ່ກ່ຽວຂ້ອງ.

ສຳລັບຂັ້ນຕອນການກວດກາ ແລະ ຢັ້ງຢືນ ສຳລັບດ່ານຂາເຂົ້າ ໃຫ້ປະຕິບັດຕາມຂັ້ນຕອນການປະຕິບັດຢູ່ດ່ານໃນເວລານຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

ສຳລັບຂັ້ນຕອນ ຢູ່ດ່ານຂາອອກ ໃຫ້ປະຕິບັດ ຕາມມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 20 ມາດຕະການຄວບຄຸມການສົ່ງຜ່ານ**

ການສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຕ້ອງປະຕິບັດຕາມມາດຕະການ ດັ່ງນີ້:

1. ໄປຕາມເສັ້ນທາງທີ່ກຳນົດໄວ້ໃນໃບອະນຸຍາດ, ໃນກໍລະນີທີ່ມີຄວາມຈຳເປັນຕ້ອງໄດ້ນຳສິນຄ້າຂົນສົ່ງໄປເສັ້ນທາງອື່ນ ຍ້ອນເກີດເຫດການສຸກເສີນໃດໜຶ່ງ ຜູ້ຂົນສົ່ງຜ່ານ ຕ້ອງແຈ້ງໃຫ້ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ບ່ອນທີ່ເກີດເຫດສຸກເສີນ ເພື່ອແກ້ໄຂຊ່ວຍໃຫ້ທັນການ ພ້ອມທັງແຈ້ງໃຫ້ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານຂາເຂົ້າ ແລະ ອອກ ຮັບຊາບ;

2. ດຳເນີນການບຳບັດສິນຄ້າທີ່ຂົນສົ່ງຜ່ານ ໃນກໍລະນີທີ່ພົບການສົງໄສ;

3. ມີລະບົບການຕິດຕາມ ໃນເວລາຂົນສົ່ງ;

4. ຮັບປະກັນການບັນຈຸ ເຊັ່ນ: ພາຫະນະ, ຕູ້ແຊ່ເຢັນ, ພາຊະນະບັນຈຸ ແລະ ການຫຸ້ມຫໍ່ ຕ້ອງບໍ່ໃຫ້ຮົ່ວໄຫຼ;

5. ຂົນສົ່ງຜ່ານ ຕາມໄລຍະເວລາທີ່ກຳນົດ;

6. ດຳເນີນການກຳຈັດນ້ຳ ແລະ ສິ່ງເສດເຫຼືອ ຢ່າງມີປະສິດທິພາບ;

7. ໃນກໍລະນີສຸກເສີນ ທີ່ມີການຄ່ຽນຖ່າຍສິນຄ້າຕ້ອງມີການກວດກາຕິດຕາມ ໂດຍເຈົ້າໜ້າທີ່ ທີ່ໄດ້ຮັບມອບໝາຍ;

8. ມີລະບົບຮອງຮັບ ເພື່ອກັນ ແລະ ຄວບຄຸມພະຍາດສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ;

9. ປະກອບເອກະສານ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ປະເທດປາຍທາງຮຽກຮ້ອງ.

**ມາດຕາ 21 ການປະຕິເສດການສົ່ງຜ່ານ**

ດ່ານກວດກາສັດຕະວະແພດ ສາມາດສະເໜີ ກົມລ້ຽງສັດ ແລະ ການປະມົງ ເພື່ອພິຈາລະນາ ໂຈະ ຫຼື ຍົກເລີກໃບອະນຸຍາດສົ່ງຜ່ານ ຖ້າພົບ ກໍລະນີໃດໜຶ່ງ ດັ່ງນີ້:

1. ປະເພດ ຫຼື ປະລິມານສິນຄ້າ ບໍ່ຖືກຕ້ອງກັບຂໍ້ມູນທີ່ໄດ້ກຳນົດໄວ້ ໃນໃບອະນຸຍາດສົ່ງຜ່ານ;

2. ນຳສິນຄ້າເຂົ້າດ່ານ ທີ່ບໍ່ຖືກຕາມການກຳນົດໃນໃບອະນຸຍາດນຳເຂົ້າ;

3. ນຳໃຊ້ໃບອະນຸຍາດສົ່ງຜ່ານທີ່ໝົດອາຍຸການນຳໃຊ້;

4. ສົງໄສ ມີ ຫຼື ປົນເປື້ອນເຊື້ອພະຍາດ ທີ່ກຳນົດໃນບັນຊີລາຍຊື່ພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ;

5. ມີການລາຍງານພະຍາດສັດນ້ຳ ລະບາດຢູ່ປະເທດສົ່ງອອກ.

ຫາກເກີດກໍລະນີຕ້ອງໄດ້ປະຕິເສດ, ສົ່ງກັບ ຫຼື ມີການທຳລາຍ ກົມລ້ຽງສັດ ແລະ ການປະມົງ ຕ້ອງແຈ້ງໃຫ້ອົງການທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງຊາບ ພາຍໃນ ຊາວສີ່ຊົ່ວໂມງ.

## ໝວດທີ 5
## ການເຄື່ອນຍ້າຍ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ

### ມາດຕາ 22 ພາຫະນະຂົນສົ່ງສັດນ້ຳ ແລະ ຜະລິດຕະພັນສັດນ້ຳ

ພາຫະນະທີ່ນຳໃຊ້ເຂົ້າໃນການຂົນສົ່ງສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຕ້ອງອອກແບບໃຫ້ສາມາດທົນຕໍ່ການຮັບນ້ຳໜັກຂອງສິນຄ້າທີ່ຈະບັນຈຸ, ສາມາດກວດກາສ່ວນປະກອບພາຍໃນໄດ້ຢ່າງສະດວກ, ຮັບປະກັນບໍ່ໃຫ້ຮົ່ວຊຶມ ແລະ ກະຈາຍນ້ຳເສດເຫຼືອອອກສູ່ພາຍນອກ.

### ມາດຕາ 23 ນ້ຳໃຊ້ສຳລັບການຂົນສົ່ງສັດນ້ຳ

ນ້ຳທີ່ໃຊ້ສຳລັບການຂົນສົ່ງສັດນ້ຳ ຕ້ອງມີຄຸນນະພາບເໝາະສົມກັບສັດນ້ຳແຕ່ລະຊະນິດ.

ນ້ຳທີ່ເຫຼືອຖິ້ມຈາກການຂົນສົ່ງສັດນ້ຳ ກ່ອນປ່ອຍລົງສູ່ທຳມະຊາດ ຫຼື ສະຖານທີ່ອື່ນຕ້ອງບຳບັດຕາມວິທີການ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ.

### ມາດຕາ 24 ການອະນາໄມ ແລະ ຂ້າເຊື້ອ

ພາຫະນະ, ຖັງ ຫຼື ອຸປະກອນທີ່ໃຊ້ສຳລັບການຂົນສົ່ງສັດນ້ຳ ຕ້ອງທຳຄວາມສະອາດ, ອະນາໄມ ແລະ ຂ້າເຊື້ອຖັງ ກ່ອນ ແລະ ຫຼັງການຂົນສົ່ງທຸກຄັ້ງ.

ຢາ ຫຼື ສານເຄມີທີ່ໃຊ້ເຂົ້າໃນການຂ້າເຊື້ອພະຍາດສັດນ້ຳ ຕ້ອງນຳໃຊ້ຊະນິດທີ່ເໝາະສົມ ແລະ ປອດໄພຕໍ່ພາຫະນະ, ຜູ້ນຳໃຊ້ ທັງສອດຄ່ອງກັບຄຳແນະນຳຂອງຜູ້ຜະລິດ.

### ມາດຕາ 25 ການຂົນສົ່ງ ປາ ແລະ ສັດນ້ຳ ທີ່ມີຊີວິດ

ການຂົນສົ່ງ ປາ ແລະ ສັດນ້ຳທີ່ມີຊີວິດ ຄວນບັນຈຸໃສ່ຄອນເທນເນີ, ຖັງ ຫຼື ຖົງ ທີ່ມີນ້ຳສະອາດ, ມີປະລິມານອົກຊີແຊນທີ່ພຽງພໍ ແລະ ອັດຕາການປ່ອຍທີ່ເໝາະສົມ ຕາມຄຳແນະນຳຂອງ ກົມລ້ຽງສັດ ແລະ ການປະມົງ.

ໃນກໍລະນີ ຂົນສົ່ງປາ ແລະ ສັດນ້ຳ ດ້ວຍເຮືອບິນ ຜູ້ປະກອບການຕ້ອງປະຕິບັດຕາມກົດລະບຽບການຂົນສົ່ງສັດນ້ຳທີ່ມີຊີວິດ ຂອງສະມາຄົມຂົນສົ່ງທາງອາກາດລະຫວ່າງປະເທດ (International Air Transport Association: Live Aquatic Animal Regulation, General Container Requiments for Aquatic).

### ມາດຕາ 26 ການຂົນສົ່ງຜະລິດຕະພັນສັດນ້ຳ ເພື່ອການບໍລິໂພກ

ການຂົນສົ່ງຜະລິດຕະພັນສັດນ້ຳ ສຳລັບການບໍລິໂພກ ເປັນຕົ້ນ ປາ, ສັດນ້ຳເປັນໂຕທີ່ຕາຍແລ້ວ, ຊີ້ນປາ, ຊີ້ນສັດນ້ຳທີ່ແຍກເປັນສິ້ນສ່ວນ ຫຼື ຊອຍແລ້ວ ຄວນຂົນສົ່ງໃນສະພາບທີ່ມີຄວາມເຢັນ ແລະ ປະຕິບັດມາດຕະການຄວບຄຸມຄວາມປອດໄພຂອງອາຫານທີ່ ກະຊວງສາທາລະນະສຸກ ກຳນົດ.

# ໝວດທີ 6
# ຂໍ້ຫ້າມ

**ມາດຕາ 27 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳປະເພດເກືອດຫ້າມ ຕາມທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ;

2. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ຜະລິດຕະພັນສິນຄ້າກ່ຽວກັບສັດນ້ຳ ທີ່ປົນເປື້ອນສານເຄມີທີ່ເປັນອັນຕະລາຍຕໍ່ຜູ້ບໍລິໂພກ;

3. ນຳເຂົ້າ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຈາກປະເທດ ຫຼື ເຂດໃດໜຶ່ງ ຂອງປະເທດສົ່ງອອກທີ່ເກີດການລະບາດຂອງສັດນ້ຳທີ່ຈຳເປັນຕ້ອງແຈ້ງ;

4. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ຜະລິດຕະພັນສັດນ້ຳ ທີ່ບໍ່ເໝາະສົມສຳລັບການບໍລິໂພກ ຫຼື ບໍ່ສາມາດໃຊ້ເປັນປະໂຫຍດໄດ້ ຫຼື ບໍ່ໄດ້ຜ່ານການບຳບັດ-ຂ້າເຊື້ອຕາມຫຼັກວິຊາການທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ;

5. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ປະເພດຄຸ້ມຄອງ ແລະ ຫວງຫ້າມ ພາຍໃຕ້ຂໍ້ຕົກລົງຂອງສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (CITES) ທີ່ບໍ່ໄດ້ຮັບການອະນຸຍາດ;

6. ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ເຂົ້າ-ອອກ ດ່ານທີ່ບໍ່ໄດ້ກຳນົດຢູ່ໃນໃບອະນຸຍາດ;

7. ຖອກນ້ຳເສຍທີ່ນຳໃຊ້ ສຳລັບການຂົນສົ່ງສັດນ້ຳ ທີ່ປົນເປື້ອນດ້ວຍ ເຊື້ອພະຍາດ ຫຼື ສານເຄມີທີ່ເປັນອັນຕະລາຍ ລົງສູ່ຫ້ວຍຮ່ອງ, ຄອງລະບາຍນ້ຳ ຫຼື ແຫຼ່ງນ້ຳທຳມະຊາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 28 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສັດຕະວະແພດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ, ຖ່ວງດຶງ ຫຼື ຮຽກເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ບຸກຄົນ;

2. ເປີດເຜີຍຄວາມລັບ ຂອງ ລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ປອມແປງເອກະສານ ຫຼື ອອກເອກະສານ ບໍ່ຖືກຕ້ອງ;

4. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈົບຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການບໍ່ຖືກຕ້ອງຕາມລະບຽບການ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ

**ມາດຕາ 29 ອົງການຄຸ້ມຄອງ ແລະ ກວດກາ**

ອົງການຄຸ້ມຄອງ ແລະ ກວດກາ ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ແມ່ນອັນດຽວກັນກັບອົງການຄຸ້ມຄອງການປະມົງ ຊຶ່ງປະກອບດ້ວຍ:

1. ອົງການຄຸ້ມຄອງການປະມົງຂັ້ນສູນກາງ ແມ່ນ ກົມລ້ຽງສັດ ແລະ ການປະມົງ;
2. ອົງການຄຸ້ມຄອງການປະມົງຂັ້ນແຂວງ ແມ່ນ ຂະແໜງລ້ຽງສັດ ແລະ ການປະມົງ;
3. ອົງການຄຸ້ມຄອງການປະມົງຂັ້ນເມືອງ ແມ່ນ ຫ້ອງການກະສິກໍາ ແລະ ປ່າໄມ້;
4. ດ່ານກວດກາສັດຕະວະແພດ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງ ກົມລ້ຽງສັດ ແລະ ການປະມົງ**

ໃນການຄຸ້ມຄອງວຽກງານ ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ, ກົມລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງລະບົບການຄວບຄຸມ ແລະ ຕິດຕາມ ກວດກາ ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ຂອງ ສປປ ລາວ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ;

2. ຮ່າງມາດຕະຖານເຕັກນິກ ແລະ ລະບຽບການສະເພາະ ກ່ຽວກັບການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ເພື່ອສະເໜີ ກະຊວງກະສິກໍາ ແລະ ປ່າໄມ້ ຮັບຮອງປະກາດໃຊ້;

3. ພັດທະນາ ຄູ່ມື ແລະ ຄໍາແນະນໍາດ້ານວິຊາການ, ຄູ່ມືກ່ຽວກັບການກວດກາການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ໃຫ້ສອດຄ່ອງ ແລະ ຮັດກຸມ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ ຫຼື ການຈັດຕັ້ງ ທີ່ໄດ້ຮັບມອບໝາຍ ໄດ້ນໍາໃຊ້ຢ່າງເປັນເອກະພາບ;

4. ດໍາເນີນການປະເມີນຄວາມສ່ຽງ, ກວດກາ ແລະ ຢັ້ງຢືນ ດ້ານສຸຂານາໄມສັດນໍ້າ;

5. ປຶກສາຫາລື ກັບປະເທດຄູ່ຄ້າ ກ່ຽວກັບການກໍານົດຄວາມເທົ່າທຽມກັນ, ຮັບຮູ້ມາດຕະການໃນການຄວບຄຸມການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ລະຫວ່າງ ສປປ ລາວ ກັບ ຕ່າງປະເທດ;

6. ອອກ, ໂຈະ ຫຼື ຖອນໃບອະນຸຍາດ ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນໍ້າ ແລະ ຜະລິດຕະພັນສັດນໍ້າ;

7. ຊີ້ນໍາດ່ານກວດກາສັດຕະວະແພດ ແລະ ຄຸ້ມຄອງການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ;

8. ເຝົ້າລະວັງ, ກັນ ແລະ ນໍາໃຊ້ມາດຕະການຄວບຄຸມພະຍາດສັດນໍ້າ ຢູ່ໃນຂະບວນການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ;

9. ສ້າງສິ່ງອໍານວຍຄວາມສະດວກ ໃຫ້ແກ່ການກັກກັນກ່ອນສົ່ງອອກ ແລະ ຫຼັງການນໍາເຂົ້າ;

10. ນໍາໃຊ້ມາດຕະການຕໍ່ຜູ້ລະເມີດ ລະບຽບການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ເປັນຕົ້ນ ບໍ່ຕໍ່ໃບອະນຸຍາດ, ສັ່ງໃຫ້ສົ່ງກັບ ຫຼື ທໍາລາຍ;

11. ຮັບ ແລະ ແກ້ໄຂ ຄໍາສະເໜີກ່ຽວກັບ ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນໍ້າ ແລະ ຜະລິດຕະພັນສັດນໍ້າ;

12. ລາຍງານ ການຈັດຕັ້ງປະຕິບັດວຽກງານ ຄວບຄຸມການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນໍ້າ

ແລະ ຜະລິດຕະພັນສັດນ້ຳ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງ ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ**

ໃນການຄຸ້ມຄອງວຽກງານນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ, ຂະແໜງລ້ຽງສັດ ແລະ ການປະມົງຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແຜນການຄວບຄຸມ ແລະ ຕິດຕາມ ກວດກາ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຂອງ ອົງການຄຸ້ມຄອງການປະມົງຂັ້ນສູນກາງ;

2. ຕິດຕາມ, ກວດກາ ແລະ ລາຍງານ ການປະຕິບັດມາດຕະຖານເຕັກນິກ ແລະ ລະບຽບການກ່ຽວກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

3. ເຂົ້າຮ່ວມການປະເມີນຄວາມສ່ຽງ ແລະ ກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

4. ຄຸ້ມຄອງການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

5. ນຳໃຊ້ມາດຕະການດ້ານວິຊາການ ເປັນຕົ້ນ ການເຝົ້າລະວັງ, ກັນ, ຄວບຄຸມ ແລະ ກຳຈັດພະຍາດສັດນ້ຳ ຫຼື ທຳລາຍສິ່ງທີ່ເປັນອັນຕະລາຍ ຢູ່ໃນຂະບວນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ;

6. ນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດ ລະບຽບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ເປັນຕົ້ນ ສະເໜີ ງົດຕໍ່ໃບອະນຸຍາດ, ໂຈະ ຫຼື ຍົກເລີກໃບອະນຸຍາດ, ສັ່ງໃຫ້ສົ່ງກັບ ຫຼື ທຳລາຍ;

7. ຈັດຕັ້ງປະຕິບັດຄຳແນະນຳດ້ານວິຊາການ ກ່ຽວກັບການກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ທີ່ ອົງການຄຸ້ມຄອງການປະມົງຂັ້ນສູນກາງ ກຳນົດ;

8. ອຳນວຍຄວາມສະດວກ ແລະ ກວດກາ ໃນການກັກກັນກ່ອນການສົ່ງອອກ, ຫຼັງການນຳເຂົ້າ ແລະ ລະຫວ່າງການສົ່ງຜ່ານ;

9. ຮັບ ແລະ ແກ້ໄຂຄຳສະເໜີກ່ຽວກັບ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

10. ລາຍງານ ການຈັດຕັ້ງປະຕິບັດວຽກງານ ຄວບຄຸມການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ໃຫ້ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊ່ວຍ ອົງການຄຸ້ມຄອງການປະມົງຂັ້ນແຂວງ ໃນການຈັດຕັ້ງປະຕິບັດແຜນການຄວບຄຸມ ແລະ ຕິດຕາມກວດກາ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

2. ເຂົ້າຮ່ວມການປະເມີນຄວາມສ່ຽງ ແລະ ກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

3. ນຳໃຊ້ມາດຕະການດ້ານວິຊາການ ເປັນຕົ້ນ ການເຝົ້າລະວັງ, ກັນ, ຄວບຄຸມ ແລະ ກຳຈັດພະຍາດສັດນ້ຳ ຫຼື ທຳລາຍສິ່ງທີ່ເປັນອັນຕະລາຍ ຢູ່ໃນຂະບວນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ຕາມການມອບ

ໝາຍຂອງ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;

4. ສະເໜີ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ນຳໃຊ້ມາດຕະການຕໍ່ຜູ້ທີ່ບໍ່ໃຫ້ຄວາມຮ່ວມມື ໃນການປະຕິບັດເງື່ອນໄຂການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຂອງ ສປປ ລາວ ເປັນຕົ້ນ ບໍ່ຕໍ່ໃບອະນຸຍາດ, ການໂຈະ-ຍົກເລີກ, ການສັ່ງໃຫ້ສົ່ງກັບ ຫຼື ທຳລາຍ;

5. ຈັດຕັ້ງປະຕິບັດຄຳແນະນຳດ້ານວິຊາການ ກ່ຽວກັບການກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ທີ່ ອົງການຄຸ້ມຄອງການປະມົງຂັ້ນສູນກາງ ກຳນົດ;

6. ອຳນວຍຄວາມສະດວກ ແລະ ກວດກາ ໃນການກັກກັນກ່ອນສົ່ງອອກ, ຫຼັງການນຳເຂົ້າ, ແລະ ລະຫວ່າງການສົ່ງຜ່ານ;

7. ຮັບ ແລະ ແກ້ໄຂຄຳສະເໜີກ່ຽວກັບ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

8. ລາຍງານ ການຈັດຕັ້ງປະຕິບັດວຽກງານ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ໃຫ້ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

9. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງດ່ານກວດກາສັດຕະວະແພດ**

ໃນການຄຸ້ມຄອງວຽກງານ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ, ດ່ານກວດກາສັດຕະວະແພດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການລ້ຽງສັດ ແລະ ສັດຕະວະແພດ ແລະ ການປະມົງ;

2. ກວດກາ, ອຳນວຍຄວາມສະດວກ ໃຫ້ແກ່ການ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ຕາມກົດໝາຍ ແລະ ລະບຽບການ;

3. ກວດກາ, ພິຈາລະນາ ແລະ ຢັ້ງຢືນຄວາມຖືກຕ້ອງ ຂອງຜະລິດຕະພັນສິນຄ້າປະມົງ ແລະ ເອກະສານທີ່ກ່ຽວຂ້ອງໃນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

4. ນຳໃຊ້ມາດຕະການສຸຂານາໄມ ເປັນຕົ້ນ ກັກ, ສົ່ງຕໍ່ຢ່າງໄປວິໄຈ, ບຳບັດ, ປະຕິເສດການນຳເຂົ້າ, ສົ່ງກັບຄືນ, ທຳລາຍສັດນ້ຳ, ຜະລິດຕະພັນສັດນ້ຳ ຫຼື ວັດຖຸ ທີ່ປົນເປື້ອນດ້ວຍເຊື້ອພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ;

5. ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບການກະທຳຜິດ ແລະ ລາຍງານໃຫ້ການຈັດຕັ້ງ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອແກ້ໄຂຕາມກົດໝາຍ ແລະ ລະບຽບການ;

6. ເກັບ ຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການ ພ້ອມທັງຄຸ້ມຄອງ, ນຳໃຊ້ ຕາມລະບຽບການ;

7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ;

8. ຮັບ ແລະ ແກ້ໄຂຄຳສະເໜີກ່ຽວກັບ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

9. ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ ອົງການຄຸ້ມຄອງການປະມົງ ຕາມການແບ່ງຂັ້ນຄຸ້ມຄອງ ຢ່າງເປັນປົກກະຕິ;

10. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ສັດຕະວະແພດ**

ໃນການຄຸ້ມຄອງວຽກງານ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ, ເຈົ້າໜ້າທີ່ສັດຕະວະແພດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ກວດກາສະຖານທີ່ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ສະຖານທີ່ກັກກັນ, ສະຖານທີ່ເຕົ້າໂຮມສັດນ້ຳ ແລະ ສະຖານທີ່ກ່ຽວຂ້ອງອື່ນ ລວມທັງສະຖານທີ່ເກັບຮັກສາຜະລິດຕະພັນສັດນ້ຳ, ຍານພາຫະນະບັນທຸກ ໃນໂມງລັດຖະການ ຫຼື ຕາມການມອບໝາຍ ໃນກໍລະນີທີ່ມີເຫດການສົງໄສວ່າມີການກະທຳຜິດ ຫຼື ລະເມີດກົດໝາຍ ຫຼື ລະບຽບການ;

2. ກວດກາເອກະສານກ່ຽວຂ້ອງກັບສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ລວມທັງ ວິທີການລ້ຽງ ຫຼື ວິທີການເກັບຮັກສາຜະລິດຕະພັນສັດນ້ຳ;

3. ເກັບຕົວຢ່າງ ເພື່ອການກວດກາວິໄຈຊອກຫາພະຍາດ ແລະ ສິ່ງທີ່ເປັນອັນຕະລາຍ ພ້ອມທັງສືບສວນ-ສອບສວນຫາຂໍ້ມູນທີ່ແທ້ຈິງ;

4. ກວດຄົ້ນ, ຍຶດ ສັດນ້ຳ ຫຼື ຜະລິດຕະພັນສັດນ້ຳ ທີ່ບໍ່ໄດ້ຮັບອະນຸຍາດ, ຕິດ ຫຼື ປົນເປື້ອນດ້ວຍເຊື້ອພະຍາດ ແລະ ສິ່ງທີ່ເປັນອັນຕະລາຍ ລວມທັງເຄື່ອງມື, ເຄື່ອງໃຊ້, ພາຊະນະບັນຈຸ, ຫີບຫໍ່, ສະຫຼາກ ແລະ ເອກະສານ ຫຼື ວັດຖຸອື່ນ ທີ່ມີເຫດອັນຄວນທີ່ເຊື່ອໄດ້ວ່າມີການກ່ຽວຂ້ອງກັບການກະທຳຄວາມຜິດ ຫຼື ລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;

5. ສະເໜີໃຫ້ບຸກຄົນ ມາໃຫ້ປາກຄຳ ຫຼື ຮຽກເອົາເອກະສານ ຫຼື ຫຼັກຖານ ເພື່ອປະກອບການພິຈາລະນາຂອງພະນັກງານ ແລະ ເຈົ້າໜ້າທີ່;

6. ປະສານຫາຜູ້ໄດ້ຮັບອະນຸຍາດ ແລະ ຜູ້ມີໜ້າທີ່ກ່ຽວຂ້ອງກັບ ການຜະລິດ, ຈຳໜ່າຍ, ນຳເຂົ້າ ຫຼື ສົ່ງອອກ ແລະ ໃຫ້ອຳນວຍຄວາມສະດວກ ໃຫ້ແກ່ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່;

7. ສະແດງບັດສະເພາະເຈົ້າໜ້າທີ່ສັດຕະວະແພດ ໃນເວລາປະຕິບັດງານ ຕໍ່ບຸກຄົນທີ່ກ່ຽວຂ້ອງ;

8. ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ການຈັດຕັ້ງ ຢ່າງເປັນປົກກະຕິ ແລະ ໃນກໍລະນີພົບການລະເມີດ ຫຼື ບໍ່ໃຫ້ຄວາມຮ່ວມມືຂອງຜູ້ປະກອບການ;

9. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 35 ການກວດກາວຽກງານ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ**

ການກວດກາວຽກງານ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ແມ່ນການກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ເພື່ອໃຫ້ວຽກງານດັ່ງກ່າວ ຖືກຕ້ອງຕາມລະບຽບ, ກົດໝາຍ ຊຶ່ງມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

**ມາດຕາ 37 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ ແລະ ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ

ປອ.ລຽນ ທິແກ້ວ